ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 478 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 13.4.2020

ດ່ວນທີ່ສຸດ

## ແຈ້ງການ

ຮຽນ:- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ທົ່ວປະເທດ ທີ່ນັບຖື.

- ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ.
- ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.

ເລື່ອງ: ຫ້າມຈຳໜ່າຍ ເຫຼົ້າ, ເບຍ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ ທຸກປະເພດ ໃນໄລຍະພັກບຸນປີໃໝ່ລາວ.

- ອີງຕາມຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ COVID-19.
- ອີງຕາມການສະເໜີ ຂອງກອງປະຊຸມຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນວັນທີ 11 ເມສາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງ ມາຍັງທ່ານຊາບ ດັ່ງນີ້:

1. ເພື່ອເພີ່ມທະວີມາດຕະການ ໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ທີ່ເຫັນວ່າຍັງມີການແຜ່ລະບາດ ໃນວົງກວ້າງ ແລະ ຮ້າຍແຮງ ໃນປະຈຸບັນ, ສະນັ້ນ ດ້ວຍຄວາມເປັນຫ່ວງເປັນໃຍຕໍ່ສຸຂະພາບ ແລະ ຊີວິດຂອງປະຊາຊົນ ລັດຖະບານ ຈຶ່ງໄດ້ຕົກລົງຫ້າມບໍ່ໃຫ້ຕົວແທນຈຳໜ່າຍ, ຮ້ານຊຸບເປີມາເກັດ, ຮ້ານຄ້າຂາຍຍົກ-ຂາຍຍ່ອຍ, ຕະຫຼາດ, ບຸກຄົນ ລວມທັງການຄ້າຂາຍຜ່ານລະບົບອອນລາຍຕ່າງໆ ໃນຂອບເຂດທົ່ວປະເທດ ຈຳໜ່າຍເຫຼົ້າ, ເບຍ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ ທຸກປະເພດ ເລີ່ມແຕ່ເວລາ 6:00 ໂມງເຊົ້າ ຂອງວັນທີ 13 ເມສາ ຫາ ເວລາ 6:00 ໂມງເຊົ້າ ຂອງວັນທີ 20 ເມສາ 2020.



สแกนด้วย CamScanner

2. ມອບໃຫ້ອົງການປົກຄອງທ້ອງຖິ່ນ ໂດຍສະເພາະເມືອງ, ບ້ານ, ເຈົ້າໜ້າທີ່ກວດກາການຄ້າ ແລະ ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ເປັນເຈົ້າການ ໃນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ການປະກາດຫ້າມ ຕາມທີ່ລະບຸໃນຂໍ້ທີ 1 ຂອງແຈ້ງການສະບັບນີ້, ຖ້າມີຜູ້ລະເມີດ ກໍ່ໃຫ້ດຳເນີນການຕາມລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ

ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ກະຊວງສາທາລະນະສຸກ | 01 ສະບັບ |
| 4. ຄະນະ ຫສນຍ ທຸກພາກສ່ວນ | 01 ສະບັບ |
| 5. ກົມກວດກາ, ຫສນຍ | 01 ສະບັບ |
| 6. ສຳເນົາ | 01 ສະບັບ |



สแกนด้วย CamScanner